german
cooperation
DEUTSCHE ZUSAMMENARBEIT

ຈັດພິມໂດຍ

giz Deutsche Gesellschaft
für Internationale
Zusammenarbeit (GIZ) GmbH




# ໂຄງການ ສຸຂະພາບດີ ໃນໂຮງຮຽນ

## ການປັບປຸງນ້ຳສະອາດ, ສຸຂາພິບານ ແລະ ອະນາໄມ (WASH) ໃນໂຮງຮຽນ

## ຄວາມເປັນມາ

ນັກຮຽນທີ່ມັກເຈັບປ່ວຍ ຍ້ອນພະຍາດຕ່າງໆ ມັກຂາດຮຽນ, ນອນໜ້ອຍ ແລະ ສະແດງໃຫ້ເຫັນວ່າ ໂດຍລວມແລ້ວ ຜົນການຮຽນຕ່ຳກວ່າ ຖ້າທຽບໃສ່ນັກຮຽນທີ່ມີສຸຂະພາບແຂງແຮງດີ. ໃນປະເທດລາວ, ກຳປູເຈຍ, ອິນໂດເນເຊຍ ແລະ ຟີລິບປິນ, ພະຍາດຕ່າງໆທີ່ກ່ຽວຂ້ອງກັບການຂາດອະນາໄມ ເຊັ່ນ: ພະຍາດຖອກທ້ອງ ແລະ ພະຍາດອັກເສບລະບົບຫາຍໃຈ ຍັງເປັນສາເຫດຂອງການເຈັບປ່ວຍ ແລະ ການເສຍຊີວິດໃນບັນດາເດັກນ້ອຍ. ໜຶ່ງໃນເດັກນ້ອຍ 7 ຄົນ ທີ່ເຂົ້າໂຮງຮຽນ ມີແມ່ທ້ອງໃນລຳໄສ້ ແລະ ຫຼາຍກ່ວາ 90 ເປີເຊັນ ຂອງນັກຮຽນ ບໍ່ໄດ້ຮັບການປິ່ນປົວແຂ້ວແມງຊະນິດຮ້າຍແຮງ.

ໃນລາວ, ມີ ເດັກຊາຍ ແລະ ເດັກຍິງ ຈຳນວນ 850,000 ຄົນ ເຂົ້າໂຮງຮຽນ ໃນຈຳນວນ 8,900 ໂຮງຮຽນປະຖົມທັງໝົດ. ໃນຈຳນວນໂຮງຮຽນດັ່ງກ່າວ, ມີພຽງປະມານເຄິ່ງໜຶ່ງເທົ່ານັ້ນ ທີ່ມີວິດຖ່າຍ ແລະ ມີການສະໜອງນ້ຳ ຢ່າງເປັນປົກກະຕິ. ບາງບ່ອນມີສິ່ງອຳນວຍຄວາມສະດວກດັ່ງກ່າວ, ກໍບໍ່ໄດ້ຖືກນຳໃຊ້ ເພາະວ່າ ສ່ວນຫຼາຍແລ້ວ ແມ່ນຖືກປິດປະຕູໄວ້, ເປ່ເພ ຫຼືວ່າ ເປື້ອນເປິ. ຍັງມີອຸປະສັກຫຼາຍຢ່າງທາງດ້ານນ້ຳ, ສຸຂະພິບານ ແລະ ອະນາໄມ ໃນໂຮງຮຽນ ເຊັ່ນ: ຍັງບໍ່ທັນມີຂອບງານລະດັບຊາດ ໃນການຕິດຕາມກວດກາດ້ານນ້ຳ, ສຸຂະພິບານ ແລະ ອະນາໄມ ໃນໂຮງຮຽນ, ການຈັດສັນງົບປະມານປະຈຳປີໃຫ້ແກ່ໂຮງຮຽນ ຍັງບໍ່ພຽງພໍ, ແລະ ຂີດຄວາມສາມາດຂອງບຸກຄະລາກອນ ທີ່ກ່ຽວຂ້ອງກັບການບຳລຸງຮັກສາວິດຖ່າຍ ແລະ ຈັດຫານ້ຳ ຍັງມີຈຳກັດ.
ໂຄງການ ສຸຂະພາບດີ ໃນໂຮງຮຽນ (FIT) ແກ້ໄຂອຸປະສັກເຫຼົ່ານີ້ດ້ວຍກິດຈະກຳທີ່ມີມູນຄ່າຕ່ຳ ແລະ ມີຫຼັກຖານອ້າງອີງ.




## ເປົ້າໝາຍ

ທິດທາງຂອງໂຄງການ ສຸຂະພາບດີ ໃນໂຮງຮຽນ ເສີມສ້າງຄວາມເຂັ້ມແຂງໃນການຄຸ້ມຄອງໂຮງຮຽນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດການລ້າງມືໃສ່ສະບູເປັນກຸ່ມທຸກວັນ, ການຖູແຂ້ວໃສ່ຢາຖູແຂ້ວທີ່ມີ ຟລູໂອໄຣດ໌ ເປັນກຸ່ມທຸກວັນ ແລະ ການຂ້າແມ່ທ້ອງ ຢ່າງເປັນປົກກະຕິຕາມມາດຕະຖານ ຂອງອົງການ ອະນາໄມໂລກ (WHO) ເພື່ອກັນພະຍາດຕ່າງໆ ທີ່ມີຜົນກະທົບຮ້າຍແຮງ. ດ້ວຍການປະສົມປະສານການເຂົ້າເຖິງແຫຼ່ງນ້ຳສະອາດ, ສິ່ງອຳນວຍຄວາມສະດວກໃນການລ້າງມື ແລະ ວິດຖ່າຍ ທີ່ເໝາະສົມ, ສາມາດແກ້ໄຂບັນຫາສຳຄັນດ້ານສຸຂະພາບ ດ້ວຍການສົ່ງເສີມການປະຕິບັດກິດຈະກຳແບບຄົບຊຸດ. ໂຄງການ ສຸຂະພາບດີ ໃນໂຮງຮຽນ ສຸມໃສ່ບັນດາມາດຕະການແບບງ່າຍດາຍ, ສາມາດຂະຫຍາຍໄດ້, ມີຄວາມຍືນຍົງ ແລະ ເຊື່ອມໂຍງເຂົ້າໃນລະບົບການສຶກສາ. ໂຄງການນີ້ມີຄວາມແຕກຕ່າງກັບການສົ່ງເສີມ ສຸຂະພາບ ໃນໂຮງຮຽນແບບເກົ່າທີ່ມີຢູ່ແລ້ວ, ໂດຍມີການສະໜັບສະໜູນໃຫ້ເດັກນ້ອຍໄດ້ຝຶກນິໄສການຮັກສາສຸຂະພາບ ແລະ ສົ່ງເສີມການປ່ຽນແປງພຶດຕິກຳແບບຍືນຍົງ ດ້ວຍການຈັດຕັ້ງປະຕິບັດໃຫ້ເປັນກິດຈະວັດປະຈຳວັນ ທີ່ສາມາດສ້າງເປັນທັກສະ ແລະ ປູກຝັງເປັນນິໄສຕະຫຼອດຊີວິດ. ສ້າງນິໄສຮັກສຸຂະພາບ ໃນສະພາບແວດລ້ອມການຮຽນຮູ້ທີ່ເອື້ອອຳນວຍ ພາໃຫ້ເດັກນ້ອຍດຳລົງຊີວິດ ທີ່ເປັນຜົນດີຕໍ່ສຸຂະພາບ ແລະ ສາມາດໄດ້ຮັບຜົນປະໂຫຍດດີທີ່ສຸດ ຈາກການສຶກສາຂອງພວກເຂົາເຈົ້າ.

ໃນປີ 2011, ອົງການ ຈີໄອແຊັດ (Deutsche Gesellschaft für Internationale Zusammenarbeit (GIZ) GmbH), ດ້ວຍການຮ່ວມມືກັບສູນລະດັບພາກພື້ນ ສຳລັບບັນດາລັດຖະມົນຕີ ອົງການການສຶກສາ ອາຊີຕາເວັນອອກສ່ຽງໃຕ້ ສຳລັບນະວັດຕະກຳ ແລະ ເຕັກໂນໂລຊີການສຶກສາ (SEAMEO INNO-TECH), ໄດ້ຮັບມອບໝາຍຈາກ ກະຊວງການຮ່ວມມື ເສດຖະກິດ ແລະ ການພັດທະນາ ຂອງເຢຍລະມັນ (BMZ) ເພື່ອສະໜັບສະໜູນ ກະຊວງສຶກສາ ໃນ ສປປ ລາວ, ກຳປູເຈຍ, ອິນໂດເນເຊຍ ແລະ ຟີລິບປິນ ໃນການປະຕິບັດ ໂຄງການ ສຸຂະພາບດີ ໃນໂຮງຮຽນ. ສປປ ລາວ ໄດ້ເລີ່ມຕົ້ນ ໂຄງການ FIT ໃນປີດຽວກັນນັ້ນ. ມີ 22 ໂຮງຮຽນຕົວແບບໃນ 4 ຕົວເມືອງຂອງ ນະຄອນຫຼວງວຽງຈັນ



ເດັກນ້ອຍມ່ວນກັບກິດຈະກຳປົກກະຕິປະຈຳວັນ.
ຮູບໂດຍ: © GIZ/Fit for School



ພະນັກງານສາທາລະນະສຸກຊຸມຊົນ ແຈ້ງໃຫ້ພໍ່ແມ່ຜູ້ປົກຄອງຊາບເຖິງ ຄຸນປະໂຫຍດຂອງຢາຂ້າແມ່ທ້ອງ.
ຮູບໂດຍ: © GIZ/Fit for School

ຖືກຄັດເລືອກເພື່ອທົດລອງຈັດຕັ້ງປະຕິບັດການປັບປຸງສິ່ງອຳນວຍຄວາມສະດວກດ້ານນ້ຳ, ສຸຂະພິບານ ແລະ ອະນາໄມ (WASH) ແລະ ໄດ້ດຳເນີນກິດຈະກຳ ຮັກສາອະນາໄມປະຈຳວັນ. ກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ (MoES) ເລີ່ມຕົ້ນຜັນຂະຫຍາຍໂຄງການ ແລະ ຍັງມີເປົ້າໝາຍ ເພື່ອສືບຕໍ່ຂະຫຍາຍໂຄງການດັ່ງກ່າວ ໃຫ້ກວມເອົາທັງໝົດ 17 ແຂວງ ອີກດ້ວຍ.

## WASH ແບບຄົບຊຸດ ສຳລັບ ນັກຮຽນທຸກຄົນ

ຄວາມສະເໝີພາບໃນການບັນລຸເປົ້າໝາຍການພັດທະນາ ແບບຍືນຍົງ ສິ່ງສຳຄັນແມ່ນ, ບໍ່ພຽງແຕ່ຍ້ອນວ່າຄອບຄົວທຸກຍາກທີ່ສຸດ ຢ່າງໜ້ອຍກໍສາມາດລົງທຶນໃສ່ການສ້າງສິ່ງອຳນວຍຄວາມສະດວກຂອງຕົນເອງ, ແຕ່ຍັງຍ້ອນວ່າ ພວກເຂົາເຈົ້າຄວນໄດ້ຮັບຜົນປະໂຫຍດສູງສຸດ ຍ້ອນເຂົາເຈົ້າເປັນກຸ່ມທີ່ມີຄວາມອ່ອນແອສູງ ຕໍ່ຜົນກະທົບດ້ານສຸຂະພາບທີ່ບໍ່ດີ. ສະນັ້ນ, ເດັກນ້ອຍໄດ້ຮັບຜົນປະໂຫຍດຈາກ ໂຄງການ ສຸຂະພາບດີໃນໂຮງຮຽນ ລະດັບທົ່ວປະເທດ ໂດຍບໍ່ຈຳແນກສະຖານະພາບ ດ້ານເສດຖະກິດ-ສັງຄົມ ຫຼື ເພດຂອງເຂົາເຈົ້າ. ຄວາມດ້ອຍໂອກາດ ແລະ ຄວາມບໍ່ເທົ່າທຽມກັນ ທີ່ມີຢູ່ຖືກບັ່ນທອນລົງ ແລະ ໝົດທຸກຄົນມີໂອກາດທີ່ດີກວ່າ ເພື່ອໃຫ້ມີຊີວິດທີ່ມີສຸຂະພາບດີ ແລະ ເປັນກຳລັງຜະລິດທີ່ດີ.

## ສິ່ງທີ່ພວກເຮົາໄດ້ບັນລຸ

GIZ ສະໜັບສະໜູນ ກະຊວງສຶກສາທິການ ແລະ ກິລາ (MoES) ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ໂຄງການ Fit ໃນໂຮງຮຽນໃຫ້ກວມທົ່ວປະເທດ. ມາເຖິງ ເດືອນມີນາ ປີ 2017, ໂຮງຮຽນ 400 ກວ່າ ແຫ່ງທົ່ວ ສປປ ລາວ ກຳລັງດຳເນີນ ໂຄງການ Fit ໃນໂຮງຮຽນ ໃຫ້ເປັນສ່ວນໜຶ່ງຂອງກິດຈະວັດປະຈຳວັນຂອງເຂົາເຈົ້າ, ຊຶ່ງກວມເອົານັກຮຽນ 35,000 ຄົນ ໃນຊັ້ນປະຖົມ. ທຸກແຂວງ ໃນ ສປປ ລາວ ໄດ້ສ້າງຕັ້ງໂຮງຮຽນຕົວແບບ ເພື່ອໃຫ້ໂຮງຮຽນອື່ນໄດ້ຮຽນຮູ້ນຳ. ໃນນີ້ 2 ເມືອງ ຄື: ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ ແລະ ເມືອງທ່າພະບາດ ແຂວງບໍລິຄຳໄຊ ໄດ້ຂະຫຍາຍ ໂຄງການ Fit ໃນໂຮງຮຽນ ກວມເອົາໂຮງຮຽນປະຖົມທັງໝົດໃນເມືອງຂອງຕົນ.

ກະຊວງສຶກສາທິການ ແລະ ກິລາ ຕັດສິນໃຈເລີ່ມຕົ້ນ ໂຄງການ Fit ຢູ່ໂຮງຮຽນໃນ ນະຄອນຫຼວງວຽງຈັນ ຍ້ອນວ່າ ສາມາດເຂົ້າເຖິງໂຮງຮຽນຕົວແບບໄດ້. ໃນເບື້ອງຕົ້ນ, 5 ໂຮງຮຽນຕົວແບບ ທີ່ສ້າງຕັ້ງຂຶ້ນໃນປີ 2012 ແມ່ນຢູ່ເມືອງ ສີສັດຕະນາກ. ໃນປີ 2014, ຫ້ອງການສຶກສາຂັ້ນເມືອງຂອງເມືອງສີສັດຕະນາກ ສາມາດຂະຫຍາຍໂຄງການ ໄປທຸກໂຮງຮຽນປະຖົມຂອງເມືອງ, ໂດຍມີ 22 ໂຮງຮຽນປະຖົມຂອງລັດ ແລະ 17 ໂຮງຮຽນປະຖົມເອກະຊົນ, ດ້ວຍຄວາມຄິດລິເລີ່ມຂອງພວກເຂົາເຈົ້າເອງ. ກະຊວງສຶກສາທິການ ແລະ ກິລາ ລະດົມຊຸກຍູ້ພາກສ່ວນກ່ຽວຂ້ອງຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ເລີ່ມຕົ້ນແຕ່ຂະໜາດນ້ອຍ ແລະ ປັບປຸງໃຫ້ດີຂຶ້ນເທື່ອລະຂັ້ນ. ປັດຈຸບັນນີ້, ຫ້ອງການສຶກສາທິການ ແລະ ກິລາ ຂັ້ນເມືອງ ໄດ້ເລີ່ມຕົ້ນແນະນຳໂຄງການໃນທຸກໂຮງຮຽນອານຸບານ ແລະ ໂຮງຮຽນມັດທະຍົມ ໃນເມືອງຂອງຕົນເຊັ່ນດຽວກັນ. ແຜນຍຸດທະສາດທີ່ປະສົບຜົນສຳເລັດ ໃນການນຳໃຊ້ໂຄງສ້າງຂະແໜງການສຶກສາຢ່າງມີປະສິດທິພາບ ເຊັ່ນ: ລະບົບກຸ່ມໂຮງຮຽນ ແລະ ການຮ່ວມມືກັບຄະນະຊີ້ນຳວຽກງານ ສຸຂະພາບດີ ໃນໂຮງຮຽນ ຂອງກະຊວງສາທາລະນະສຸກ, ຊຶ່ງໄດ້ສ້າງເປັນສິ່ງພິມເຜີຍແຜ່ ແລະ ວິດີໂອ, ໃນປັດຈຸບັນນີ້ ກະຊວງສຶກສາທິການ ແລະ ກິລາ ໄດ້ນຳໃຊ້ເພື່ອຝຶກອົບຮົມເມືອງອື່ນໆ ກ່ຽວກັບວິທີການທີ່ປະສົບຜົນສຳເລັດໃນການປັບປຸງ WASH ໃນໂຮງຮຽນ.









ສາມາດ ສ້າງສະຖານທີ່ ລ້າງມື ດ້ວຍການລົງທຶນພຽງເລັກໜ້ອຍ ແລະ ຊັບພະຍາກອນນ້ຳຢ່າງຈຳກັດ.
ຮູບໂດຍ: © GIZ/Fit for School



ນັກສຶກສາໃຊ້ເວລາກ່ຽວກັບຄວາມຮັບຜິດຊອບໃນການຄຸ້ມຄອງກິດຈະກຳກຸ່ມອະນາໄມ.
ຮູບໂດຍ: © GIZ/Fit for School

ມີການປະເມີນຜົນກະທົບທາງດ້ານສຸຂະພາບ ໃນໄລຍະ 2 ປີ. ເຊິ່ງໄດ້ປະຕິບັດ ໃນປີ 2014, ໂດຍມີ 22 ໂຮງຮຽນຕົວແບບ ແລະ 22 ໂຮງຮຽນສົມທຽບໃນ ນະຄອນຫຼວງວຽງຈັນ ທີ່ຈັດຕັ້ງປະຕິບັດ ໂຄງການ FIT ເຂົ້າຮ່ວມ. ການວິໄຈຄົ້ນຄວ້າໄດ້ດຳເນີນໂດຍ MoES, SEAMEO INNOTECH ແລະ GIZ ດ້ວຍການຮ່ວມມືກັບ ມະຫາວິທະຍາໄລ ລອນດອນ ແລະ ສະຖາບັນ ສາທາລະນະສຸກສາດ ແຫ່ງຊາດ ຂອງ ສປປ ລາວ. ການສຶກສາຄົ້ນຄວ້າ ໄດ້ເປີດເຜີຍວ່າ ກິດຈະກຳຖູແຂ້ວເປັນກຸ່ມ ຢ່າງເປັນປະຈຳວັນ ຂອງໂຄງການ Fit ໃນໂຮງຮຽນ ສາມາດປ້ອງກັນພະຍາດແຂ້ວແມງທີ່ເກີດໃໝ່ໄດ້ເຖິງ 37 ເປີເຊັນ. ການຈັດຕັ້ງປະຕິບັດເປັນກິດຈະວັດປະຈຳວັນ ໃນໂຮງຮຽນຕົວແບບ ເປັນຜົນພາໃຫ້ສາມາດປັບປຸງໂດຍລວມ ດ້ານຄວາມສະອາດ ແລະ ການນຳໃຊ້ໄດ້ຂອງວິດຖ່າຍໃນໂຮງຮຽນ. ປະສິດທິຜົນຂອງໂຄງການຂ້າແມ່ທ້ອງລະດັບຊາດ ສະແດງໃຫ້ເຫັນວ່າ ມີການລະບາດຂອງແມ່ທ້ອງໃນອັດຕາສ່ວນຕໍ່າ ນັບທັງໃນໂຮງຮຽນຕົວແບບ ແລະ ໂຮງຮຽນສົມທຽບ.

ການຮ່ວມມືຢ່າງເປັນຍຸດທະສາດ ລະຫ່ວາງ MoES, GIZ ແລະ ບັນດາອົງການຈັດຕັ້ງ ເຊັ່ນ: ອົງການ UNICEF ແລະ ອົງການ ອາຫານໂລກ ເປັນຜົນພາໃຫ້ຄວາມພະຍາຍາມ ເພື່ອສ້າງຕັ້ງລະບົບການຕິດຕາມກວດກາ WASH ໃນໂຮງຮຽນ ໂດຍອີງໃສ່ວິທີການ ແບບ 3 ດາວ ດ້ວຍການໃຫ້ຄຳແນະນຳແກ່ ຜູ້ອຳນວຍການໂຮງຮຽນ ແລະ ຄູນິເທດ ຂັ້ນເມືອງ ເພື່ອບັນລຸຜົນການປັບປຸງຕາມແຕ່ລະຂັ້ນຕອນ. ດ້ວຍການປະສານສົມທົບກັບໂຄງການ ອາຫານທ່ຽງ ຂອງອົງການ ອາຫານໂລກ, ໂຄງການ Fit ໃນໂຮງຮຽນ ສາມາດປັບປຸງຜົນໄດ້ຮັບດ້ານໂພຊະນາການ ດ້ວຍການລ້າງມື ກ່ອນກິນເຂົ້າ ແລະ ຖູແຂ້ວ ຫຼັງຈາກອາຫານທ່ຽງ. ອົງການສຸພະນິມິດ, Child Fund ແລະ ອົງການ ແພລນ ສາກົນ ຊ່ວຍຂະຫຍາຍໂຄງການ ດ້ວຍການປະສົມປະສານເຂົ້າໃນອົງປະກອບ WASH ຂອງພວກເຂົາເຈົ້າ ຊຶ່ງເປັນສ່ວນໜຶ່ງຂອງການສະໜັບສະໜູນຂອງພວກເຂົາເຈົ້າໃນໂຮງຮຽນໃນທົ່ວປະເທດ.

## ການມີສ່ວນຮ່ວມ ຂອງ GIZ ລາວ ໃນການຮ່ວມມືລະດັບພາກພື້ນ

ພວກເຮົາມີສ່ວນຮ່ວມ ໃນຫຼາຍໂຄງການໃນພາກພື້ນ, ຍ້ອນວ່າ ການເຊື່ອມໂຍງ ແລະ ການຮ່ວມມື ລະດັບພາກພື້ນ ເປັນປະໂຫຍດແກ່ວາລະວຽກງານພັດທະນາ ໃນ ສປປ ລາວ. ບັນດາໂຄງການລະດັບພາກພື້ນອື່ນໆ ເຂົ້າຮ່ວມໃນ ສປປ ລາວ ປະກອບມີໂຄງການ ການປັບປຸງການຄຸ້ມຄອງທີ່ດິນ ໃນຂົງເຂດແມ່ນ້ຳຂອງ, ເຊິ່ງແມ່ນການປະກອບສ່ວນຂອງ ເຢຍລະມັນ ເຂົ້າໃນໂຄງການ ການຄຸ້ມຄອງທີ່ດິນພາກພື້ນແມ່ນ້ຳຂອງຂອງປະເທດ ສະວິດເຊີແລນ ແລະ ການສະໜັບສະໜູນ ຄະນະກຳມາທິການ ແມ່ນ້ຳຂອງສາກົນ (MRC). GIZ ໃຫ້ຄຳແນະນຳແກ່ MRC ໃນການດຳເນີນຂັ້ນຕອນປະຕິຮູບການຈັດຕັ້ງ ແລະ ສະໜັບສະໜູນວຽກງານດ້ານຂະແໜງການຂອງ MRC ກ່ຽວກັບການພັດທະນາພະລັງໄຟຟ້ານ້ຳຕົກແບບຍືນຍົງ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ.

ມີອີກຫຼາຍໂຄງການຂອງພວກເຮົາ ທີ່ສະໜັບສະໜູນການເຊື່ອມໂຍງ ອາຊຽນ, ເຊັ່ນ: ການສະໜັບສະໜູນການລິເລີ່ມການເຊື່ອມໂຍງ ອາຊຽນ, ການຮ່ວມມືພາກພື້ນ ຍົກລະດັບການຝຶກອົບຮົມໃຫ້ແກ່ບຸກຄະລາກອນສາຍອະຊີວະສຶກສາ. ໂຄງການອື່ນໆ ແມ່ນກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ ວ່າດ້ວຍການແຂ່ງຂັນການຄ້າໃນ ອາຊຽນ ແລະ ການສະໜັບສະໜູນບັນດາສະຖາບັນກວດສອບສູງສຸດ.

ບັນດາໂຄງການ GIZ ໃນການຮ່ວມມືລະດັບພາກພື້ນ:

- ໂຄງການ ສຸຂະພາບດີ ໃນໂຮງຮຽນ (FIT)
- ການປັບປຸງການຄຸ້ມຄອງທີ່ດິນ ໃນຂົງເຂດແມ່ນ້ຳຂອງ (ILM-MR)
- ການບໍລິຫານນ້ຳຂ້າມແດນ ຮ່ວມກັບຄະນະກຳມາທິການແມ່ນ້ຳຂອງສາກົນ
- ການສະໜັບສະໜູນ ການລິເລີ່ມການເຊື່ອມໂຍງອາຊຽນ (IAI)
- ລະບົບອາຫານກະສິກຳ ແບບຍືນຍົງ ຂອງອາຊຽນ (SAS)
- ການຈັດຕັ້ງປະຕິບັດນະໂຍບາຍ ວ່າດ້ວຍການແຂ່ງຂັນການຄ້າ ໃນອາຊຽນ (CPL)
- ການຮ່ວມມືພາກພື້ນ ຍົກລະດັບການຝຶກອົບຮົມ ໃຫ້ແກ່ບຸກຄະລາກອນ ສາຍອະຊີວະສຶກສາ (RECOTVET)
- ການສະໜັບສະໜູນ ບັນດາສະຖາບັນກວດສອບສູງສຸດ

## ກ່ຽວກັບ GIZ

ການບໍລິການຂອງ GIZ ແມ່ນອີງໃສ່ຄວາມຊ່ຽວຊານໃນລະດັບພາກພື້ນ ແລະ ຄວາມຊຳນິຊຳນານດ້ານວິຊາການ ພ້ອມທັງຄວາມຮູ້ດ້ານການຄຸ້ມຄອງບໍລິຫານທີ່ໄດ້ຜ່ານການທົດລອງ ແລະ ທົດສອບມາແລ້ວ. ໃນນາມເປັນວິສາຫະກິດຂອງລັດ, ພວກເຮົາຊ່ວຍລັດຖະບານເຢຍລະມັນ ໃຫ້ບັນລຸຈຸດປະສົງໃນຂົງເຂດການຮ່ວມມືສາກົນ ເພື່ອການພັດທະນາແບບຍືນຍົງ.

ກະລຸນາເຂົ້າເບິ່ງໃນເວັບໄຊທ໌ຂອງພວກເຮົາ www.giz.de ສຳລັບຂໍ້ມູນເພີ່ມເຕີມ ກ່ຽວກັບ ວຽກງານຂອງ GIZ ຢູ່ໃນເອເຊຍ ແລະ ທົ່ວໂລກ.

ຈັດພິມໂດຍ: Deutsche Gesellschaft für Internationale Zusammenarbeit (GIZ) GmbH

ໂຄງການ ສຸຂະພາບດີ ໃນໂຮງຮຽນ
ຖະໜົນວັດນາກໃຫຍ່, ເຮືອນເລກທີ 247, ໜ່ວຍ 19
ບ້ານ ທ່າພະລານໄຊ, ເມືອງ ສີສັດຕະນາກ,
ນະຄອນຫລວງວຽງຈັນ, ສປປ ລາວ
ຕູ້ ປ.ນ 9233
ໂທ: 856 21 353 605
ແຟັກ: 856 21 312 408
ອີເມວ: giz-laos@giz.de
www.fitforschool.international
www.facebook.com/fitforschooLaos
www.giz.de/laos (EN); www.giz.de/laos-la (LAO)

ຜູ້ຕິດຕໍ່: ທ່ານ ອາເລັກຊັນເດີ ວິງຊາ
ຜູ້ຂຽນ: ທ່ານ ອາເລັກຊັນເດີ ວິງຊາ
ຈັດໜ້າໂດຍ: ພະແນກປະຊາສຳພັນ, ຫ້ອງການ GIZ ລາວ
ລົງວັນທີ: ເດືອນ ພຶດສະພາ ປີ 2017